**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**



ຈໍານັກງານໃຫຍ່

ເລກທີ 3462 /ທຄຕລ.2026

ນະຄອນຫຼວງວຽງຈັນ, ວັນທີ 02 OCT 2026

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈໍາໜ່າຍ ພາຍໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາຈັດຊື້ເຄື່ອງ UPS ຈໍານວນ 01 ໜ່ວຍ ຂອງ ທຄຕລ ສໍານັກງານໃຫຍ່.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບວ່າ ທຄຕລ ຕ້ອງການຈັດຊື້ເຄື່ອງ UPS ຈໍານວນ 01 ໜ່ວຍ ຂອງ ທຄຕລ ສໍານັກງານໃຫຍ່ ເພື່ອຮັບໃຊ້ວຽກງານວິຊາສະເພາະຂອງທະນາຄານ, ດັ່ງນັ້ນ ຈຶ່ງແຈ້ງເຊີນມາຍັງທ່ານ ເພື່ອຍື່ນຊອງປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ/ດ | ລາຍການ | ຈໍານວນ | ໝາຍເຫດ |
|---|---|---|---|
| 1 | APC ລຸ້ນ Symmetra PX All-In-One 48kw Scalable to 48kw, 400v (SY48K48H-PD) | 1 ເຄື່ອງ | ການຈັດຊື້ແມ່ນພ້ອມການຂົນສົ່ງ, ຕິດຕັ້ງ ລວມອຸປະກອນ, ສາຍໃຫ້ສໍາເລັດພ້ອມໃຊ້ງານ ແລະ ຂົນຍ້າຍເຄື່ອງເກົ່າຢູ່ສໍານັກງານໃຫຍ່ໄປໄວ້ສາງໂພນທັນ |

**I. ໜ້າວຽກ ແລະ ມາດຖານຂອງບໍລິສັດທີ່ຈະເຂົ້າຮ່ວມປະມູນລາຄາມີດັ່ງນີ້:**

1. ຕ້ອງເປັນບໍລິສັດທີ່ມີປະສົບການໃນການຕິດຕັ້ງເຄື່ອງ UPS ແລະ ບໍາລຸງຮັກສາໃຫ້ບັນດາອົງກອນ ຫຼື ໂຄງການ ຢ່າງໜ້ອຍ 3 ປີ ຂຶ້ນໄປ.
2. ຕ້ອງເປັນຕົວແທນ ຫຼື ພາດເນີ ກັບແບນ APC ຢູ່ ສປປ ລາວ (DKSH LAO).
3. ຕ້ອງມີເອກະສານຢັ້ງຢືນການມີພະນັກງານຊັບພອດແກ້ໄຂບັນຫາເຕັກນິກຂອງບໍລິສັດເອງ ຢ່າງໜ້ອຍ 1 ຄົນຂຶ້ນໄປ.
4. ສິນຄ້າຕ້ອງເປັນຂອງແທ້ໄດ້ມາດຕະຖານຈາກໂຮງງານຜູ້ຜະລິດ ແລະ ໃຫ້ການຮັບປະກັນສິນຄ້າຢ່າງໜ້ອຍ 1 ປີ ຂຶ້ນໄປ.
5. ບໍລິສັດຕ້ອງລະບຸໄລຍະເວລາການນໍາສິ່ງສິນຄ້າ.
6. ລວມການຂົນສົ່ງ, ຕິດຕັ້ງ, ຄ່າອຸປະກອນ ແລະ ການເດີນສາຍໄຟຕ່າງໆທັງໝົດໃຫ້ຖືກຕ້ອງຕາມເຕັກນິກຂອງລະບົບ,ພ້ອມຂົນຍ້າຍເຄື່ອງເກົ່າຢູ່ສໍານັກງານໃຫຍ່ໄປໄວ້ສາງໂພນທັນ.
7. ບໍລິສັດສາມາດເຂົ້າສໍາຫຼວດທາງດ້ານເຕັກນິກອຸປະກອນ ແລະ ສະຖານທີ່ຕິດຕັ້ງຕົວຈິງ, ສອບຖາມຂໍ້ມູນເພີ່ມຕື່ມໄດ້ຕັ້ງແຕ່ ວັນທີ 05/10/2026 ຈົນເຖິງວັນທີ 30/10/2026 ໃນໂມງລັດຖະການ.

**II. ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນລາຄາ ຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

❖ **<u>ເອກະສານ ຊອງທີ 1:</u>**

1. ໃບທະບຽນວິສາຫະກິດດ້ານໄອທີ ຫຼື ໄຟຟ້າ
2. ໃບອະນຸຍາດດໍາເນີນທຸລະກິດປີ 2025 ຫຼື 2026

3. ທຶນຈົດທະບຽນວິສາຫະກິດ 500ລ້ານກີບຂຶ້ນໄປ
4. ໃບຢັ້ງຢືນການເສຍອາກອນປີ 2024 ຫຼື 2025
5. ເອກະສານລາຍລະອຽດສະເປັກ, ການຮັບປະກັນ, ໄລຍະເວລາຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.

- ເອກະສານຂ້າງເທິງ 1. - 5. ແມ່ນໃຫ້ຍື່ນກ່ອນ **ວັນຈັນ, ທີ 19/10/2026 ເວລາ 15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ ແລະ ການເງິນ ຊັ້ນ 04 ຕຶກ C ແລະ ແລະ ສົ່ງທາງອີເມລ: phetsamone_s@bcel.com.la

❖ **<u>ເອກະສານ ຊອງທີ 2:</u> (ປິດຊອງ)**

1. ໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 04/01/2027)** ຫຼື ແຊັກທີ່ວີຊ້າແລ້ວ/ແຊັກເງິນສົດ (ທຄຕລ ບໍ່ຮັບເງິນສົດ), ຜູ້ບໍ່ຊະນະການປະມູນພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ, ສຳລັບຜູ້ຊະນະການປະມູນແມ່ນຈະສົ່ງຄືນພາຍຫຼັງເຊັນສັນຍາ.
3. **ໃນວັນພຸດ, ວັນທີ 04/11/2026 ເວລາ 14:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.
4. ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດຈັດຊື້-ຕິດຕັ້ງເອງ ແລະ ບໍ່ໃຫ້ເປັນການປະມູນ ໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ.

- **<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫລາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

III. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສານ ແລະ ທະບຽນຊັບສິນ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍທັງໝົດໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ (ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ 10% ຄືນ).

IV. **ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 30 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງ ຫຼື ເຄື່ອງມາຮອດສາງໂພນທັນຂອງ ທຄຕລ ໂດຍໄດ້ຮັບການກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ ແລະ ຕິດຕັ້ງສຳເລັດ ພ້ອມທົດລອງໃຊ້ງານ ໂດຍໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 12 ເດືອນ.

ດັ່ງນັ້ນ, ຈຶ່ງຂອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນ.ສາຍສະໝອນ ຈັນທະຈັກ

ສອບຖາມຂໍ້ມູນເພີ່ມຕື່ມ:
020 77467722
020 23598956

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ……/ທຄຕລ, ລົງວັນທີ ……..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | ໝາຍເຫດ |
|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍຕິດຕັ້ງ ແລະ ບຳລຸງຮັກສາ ໃຫ້ພາກສ່ວນໃດແນ່) | |
| 1 | ບ/ສ…… | ປີ..... | ປີ..... | ປີ..... | …. ປີ | (ໃຫ້ລະບຸ) | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ບໍລິສັດ..... (ເຊັນ ແລະ ຈໍ້າກາ)